# ບົດທີ 13

# ເລື່ອງການຂົ່ມເຫງ







**1** ຄຼິດສະຕະຈັກໄດ້ຮັບພະພອນຈາກພະເຈົ້າຫຼາຍ. ມີຫຼາຍຄົນຮັບເຊື່ອໃນພະເຢຊູຍ້ອນຄຳເທດສະໜາຂອງພວກສາວົກ, ແຕ່ຕໍ່ໄປມີຜູ້ຕໍ່ສູ້ດ້ວຍ. ໃຫ້ອ່ານ ກຈກ ບົດທີ 3 ແລະ 4.

ກ. ໃນ ກຈກ 4:2 ເປໂຕກັບໂຢຮັນປະກາດເລື່ອງການຫຍັງ? ____________________

ຂ. ໃນ ກຈກ 4:1 ແມ່ນສາມພວກໃດເຂົ້າມາຫາເປໂຕແລະໂຢຮັນ?

__________________ __________________ ແລະ __________________

ຄ. ພວກປະໂລຫິດແລະຊາດູກາຍ ມີໃຈຢ່າງໃດໃນເລື່ອງການສອນຂອງເປໂຕກັບໂຢຮັນ? (ກຈກ 4:2) ________________________________________________

ງ. ເຂົາຈັບທັງສອງເອົາໄປໄວ້ໃສ? (ກຈກ 4:3) ______________________________

**2** ທີ່ເປໂຕເທດສະໜາ 5 ເທື່ອໃນພະທຳກິດຈະການນັ້ນ ກິດຈະການ ບົດທີ 4 ນີ້ຄືຄຳເທດສະໜາເທື່ອໃດ? ________________________________________________

**3** ກິດຈະການ ບົດທີ 4 ຂໍ້ 5 ຕໍ່ໄປກ່າວເຖິງຍຸກທີ່ເປໂຕກັບໂຢຮັນຢູ່ຕໍ່ໜ້າສານໃນສາດສະໜາຢິວ. ສານນັ້ນເປັນອັນ ທີ່ ກ່າວໂທດໃຫ້ພະເຢຊູຕາຍ. ສານນັ້ນເຄີຍເອີ້ນຊື່ວ່າສານໃດ? ____

**4** ໃຫ້ອ່ານ ກຈກ 4:21

ກ. ສານນັ້ນ ຫາບໍ່ເຫັນມີເຫດທີ່ຈະໃສ່ໂທດຢ່າງໃດ ເຂົາຈຶ່ງເຮັດຫຍັງກ່ອນຈະປ່ອຍ? _____

ຂ. ໃນ ກຈກ 4:18 ເຂົາຫ້າມຫຍັງເດັດຂາດ? ______________________________

**5** ຕໍ່ໄປໃນ ກຈກ 5:17-18 ເຫັນວ່າພວກສາວົກຖືກຈັບອີກ.

ກ. ສອງພວກໃດຈັບເຂົາໄວ້? ________________________________________

ຂ. ພວກສາວົກຖືກຂັງໄວ້ຢູ່ໃສ? ______________________________________

6 ກ. ໃຜມາເປີດປະຕູໃຫ້ເຂົາອອກ? ______________

______________________________________



ຂ. ໃນ ກຈກ 5:27 ເຂົາຖືກຈັບເທື່ອທີ 3 ເມື່ອເຂົາຢືນຢູ່ຕໍ່ໜ້າ ປະຊຸມສານສູງສຸດ ແມ່ນໃຜໂຈດຖາມເຂົາ?

______________________________________

7 ໃນກິດຈະການ ບົດທີ 5 ເປໂຕເທດສະໜາເທື່ອໃດ?

______________________________________

8 ໃຫ້ອ່ານ ກຈກ 12:1-6

ກ. ກະສັດເຮໂລດຈັບເປໂຕໄວ້ເຮັດຫຍັງ? _________

ຂ. ມີທະຫານໂລມຈັກຄົນທີ່ຄວບຄຸມເປໂຕຢູ່? ______

ຄ. ມີຫຍັງລ່າມເປໂຕໄວ້? ___________________

ງ. ໃຫ້ອ່ານ ກຈກ 12:7 ແລະ 10 ເປໂຕອອກໄປໄດ້ຢ່າງໃດ?

__________________________ __________________________

9 ມາເຖິງນີ້ ເຫັນວ່າເປໂຕຖືກຈັບມາຈັກເທື່ອ? ______________________

| |
|---|
| ໃຫ້ທ່ານຂີດອ້ອມຄໍາວ່າ “ຂັງໄວ້ໃນຄຸກ” ໃນ ກຈກ 4:3 ແລະ ກຈກ 5:18<br>ແລ້ວອ້ອມຄໍາ “ຂັງຄຸກໄວ້” ໃນ ກຈກ 12:4 |

10 ນອກຈາກພວກສາວົກ ມີຄຣິດສະຕຽນຄົນອື່ນທີ່ຖືກຂົ່ມເຫງດ້ວຍ. ໃຫ້ອ່ານ ກຈກ 6:8 ແລະ 6:12 ດ້ວຍ. ອີກຄົນໜຶ່ງທີ່ຖືກຈັບນໍາໄປຫາສານສູງສຸດຄືໃຜ? ____________________

11 ໃນ ກຈກ 6:1-7 ເຫັນວ່າ ຄຣິດສະຕະຈັກໃນກຸງເຢລູຊາເລັມໄດ້ ເລືອກເອົາຄະນະ 7 ຄົນເປັນຜູ້ດູແລຮັບໃຊ້ການ ກິນ ແລະດື່ມ. ຊະເຕຟາໂນເປັນຄົນໜຶ່ງໃນຈໍານວນ 7 ຄົນນັ້ນ.

ກ. ໃນ ກຈກ 6:8 ເຫັນວ່າຊະເຕຟາໂນເຕັມໄປດ້ວຍພະຄຸນແລະລິດເດດຈຶ່ງເຮັດການຫຍັງ?

______________________________________

ຂ. ໃນ ກຈກ 6:10 ເຫັນວ່າ ຊະເຕຟາໂນກ່າວພະທໍາດ້ວຍສະຕິປັນຍາແລະດ້ວຍພະວິນຍານຈົນກວ່າຄົນເຫຼົ່ານັ້ນ ເຮັດ ຫຍັງບໍ່ໄດ້? ______________________

12 ໃນບົດທີ 16 ຂ້າງໜ້າ ເຮົາຈະຮຽນເລື່ອງຊະເຕຟາໂນຢ່າງລະອຽດກວ່າ. ໃນບົດນີ້ ມີແຕ່ຢາກຮຽນຮູ້ເລື່ອງຜົນຮັບ ປາຍ ທາງ. ໃນ ກຈກ 7:59-60 ເຂົາເຮັດຫຍັງກັບສະເຕຟາໂນ?

______________________________________

**13** ໃນປະຫວັດສາດຄຼິດສະຕຽນ ມີຫຼາຍຄົນທີ່ເປັນພະຍານເຖິງເຂົາຈະຂ້າເສຍກໍຕາມ. ຊະເຕຟາໂນຕາຍເພາະຫຍັງ? (ເລືອກ)

ກ. ______ ເປັນພະຍານ ຂ. ______ ເປັນພະຍາດ ຄ. ______ ເປັນພະຍາ

**14** ກ. ເປໂຕຖືກຂັງໄວ້ໃນຄຸກຈັກເທື່ອ? ________________

ຂ. ໃຫ້ທ່ານຈົດບົດແລະຂໍ້ໃນພະທຳກິດຈະການ ທີ່ກ່າວເຖິງການຂັງໄວ້ສາມເທື່ອນັ້ນ. (ເປີດເບິ່ງໃນພະຄຳພີກໍໄດ້) ________________

**15** ໃຜເປັນຄົນທຳອິດທີ່ເປັນພະຍານຝ່າຍພະເຢຊູຈົນເຖິງຖືກເຂົາຂ້າ? ________________

**16** ກິດຈະການ 12:1-12 ກ່າວເຖິງພະຍານຖືກຂ້າອີກຄົນໜຶ່ງ.

ກ. ພະຍານທີ່ຖືກຂ້ານັ້ນຊື່ຫຍັງ? ________________

ຂ. ໃນມັດທາຍ 10:2 ເຫັນຊື່ຂອງຢາໂກໂບອ້າຍຂອງໂຢຮັນໃນລາຍຊື່ຈຳພວກໃດ? ______

ຄ. ດັ່ງນັ້ນ ເຫັນວ່າຢາໂກໂບອ້າຍຂອງໂຢຮັນເປັນຄົນທຳອິດໃນພວກໃດທີ່ເປັນພະຍານຖືກຂ້າ? ________________

**17** ໃນມັດທາຍ 20:22-23 ພະເຢຊູທຳນວາຍເລື່ອງການຕາຍຂອງຢາໂກໂບນັ້ນ.

ກ. ໃນມາລະໂກ 10:38 ພະເຢຊູຍົກສັນຍາລັກສອງປະການທີ່ອ້າງເຖິງການຕາຍຂອງຢາໂກໂບນັ້ນ. ຢາໂກໂບຈະ ດື່ມຫຍັງ? ______________ ຈະຮັບຫຍັງ? ____________

ຂ. ຄຳທຳນວາຍທີ່ພະເຢຊູຍົກສັນຍາລັກສອງປະການນັ້ນມາກ່າວເຖິງຄວາມຕາຍຂອງຢາໂກໂບ ສຳເລັດໃນກິດຈະ ການບົດໃດ? ________________

**18** ໃຫ້ທ່ານຈື່ໄວ້ດີ ໆ ວ່າຢາໂກໂບທີ່ເປັນອ້າຍຂອງໂຢຮັນແລະເປັນຜູ້ໜຶ່ງໃນພວກສາວົກຂອງພະເຢຊູ ບໍ່ແມ່ນຄົນດຽວ ກັນກັບ ຢາໂກໂບ ໃນມັດທາຍ 13:55. ຢາໂກໂບ ໃນ ມທ 13:55 ເປັນນ້ອງຂອງໃຜ? ________________

**19** ກ. ເມື່ອກ່ອນ ພວກນ້ອງຂອງພະເຢຊູ ເຊື່ອໃນພະອົງບໍ່? (ໂຢຮັນ 7:5) ______________

ຂ. ໃນ ຄາລາເຕຍ 1:18-19 ເຫັນວ່າ ຢາໂກໂບນ້ອງຂອງພະເຢຊູເປັນຜູ້ໜຶ່ງໃນຈຳພວກຜູ້ນຳຄຼິດສະຕະຈັກໃດ? ________________

**20** ເຮໂລດຂ້າຢາໂກໂບຄົນໃດ? (ເລືອກ)

ກ. ______ ຢາໂກໂບທີ່ເປັນນ້ອງຂອງພະເຢຊູ

ຂ. ______ ຢາໂກໂບທີ່ເປັນອ້າຍຂອງໂຢຮັນ



**21** ກ. ຄຼິດສະຕຽນຄົນທຳອິດທີ່ຕາຍຍ້ອນຄວາມເຊື່ອຄືໃຜ? ________________

ຂ. ສາວົກຄົນທຳອິດທີ່ຕາຍຍ້ອນຄວາມເຊື່ອຄືໃຜ? ________________

**22** ໃຫ້ອ່ານ ກຈກ 12:1-2 ອີກ. ກະສັດໃດຂ້າຢາໂກໂບ? ____________________

**23** ເຮໂລດຄົນນີ້ ບໍ່ແມ່ນຄົນດຽວກັນກັບພວກເຮໂລດໃນສະໄໝຂອງພະເຢຊູ. ໃຫ້ເຮົາຮຽນຄືນ ເລື່ອງຄອບຄົວຂອງເຮ ໂລດ.

ກ. ເຮໂລດໃດ ສະເວີຍລາດໃນສະໄໝພະກຳເນີດ? ____________________

ຂ. ເຮໂລດໃດ ຂ້າໂຢຮັນບັບຕິສະໂຕ? ____________________

ຄ. ເຮໂລດໃດໃຈດີກວ່າໝູ່? ____________________

ງ. ພະເຢຊູຢູ່ຕໍ່ໜ້າເຮໂລດໃດ? (ລກ 23:6-7) ____________________

**24** ແຕ່ເຮໂລດໃນ ກຈກ 12 ຄືເຮໂລດອາຄີປາທີໜຶ່ງ. ເພິ່ນເປັນຫຼານຊາຍຂອງເຮໂລດຜູ້ຍິ່ງໃຫຍ່ຄື ເຮໂລດຜູ້ຍິ່ງໃຫຍ່ເປັນ ພໍ່ປູ່ຂອງເຮໂລດອາຄີປານັ້ນ. ພໍ່ຂອງອາຄີປານີ້ຊື່ອາລິດໂຕບູໂລ, ອາຄີ ປານັ້ນປົກຄອງຂອບເຂດ ຄ້າຍຄືກັນກັບທີ່ພໍ່ປູ່ປົກຄອງ. ພໍ່ປູ່ຂອງອາຄີປາທີໜຶ່ງນັ້ນຊື່ຫຍັງ?

____________________

**25** ກ. ແມ່ນເຮໂລດໃດທີ່ສັ່ງໃຫ້ຂ້າຢາໂກໂບ ແລະຂັງເປໂຕໄວ້ໃນຄຸກ? ____________________

ຂ. ຫຼັງຈາກຢາໂກໂບຕາຍ ແລະເປໂຕອອກຈາກຄຸກ ອີກບໍ່ເຫິງປານໃດເຮໂລດອາຄີປາທີໜຶ່ງ ເປັນຢ່າງໃດ? (ກຈກ 12:23) ____________________

**26** ໃນ ກຈກ 25:13 ຍົກຊື່ ເຮໂລດອາຄີປາຍອີກຜູ້ໜຶ່ງ. ອາຈານໂປໂລຖືກຕັດສິນຕໍ່ໜ້າເພິ່ນ ຜູ້ນີ້ ຄື ເຮໂລດອາຄີປາຍ ທີ ສອງເປັນບຸດຂອງເຮໂລດອາຄີປາຍທີໜຶ່ງ. ເຮໂລດອາຄີປາຍທີສອງນີ້ ເປັນເຫຼັນຂອງໃຜ? ____________________

| |
|---|
| ໃຫ້ທ່ານຂຽນຄຳວ່າ "ອາຄີປາທີໜຶ່ງ ຫຼານຂອງເຮໂລດຜູ້ຍິ່ງໃຫຍ່" ໃສ່ຂອບເຈ້ຍຂ້າງ ກຈກ 12:1. ແລ້ວຂຽນ "ອາຄີປາທີສອງ ເຫຼັນຂອງເຮໂລດຜູ້ຍິ່ງໃຫຍ່" ໃສ່ຂ້າງ ກຈກ 25:13 |

**27** ກ. ເຮໂລດໃດສັ່ງໃຫ້ຂ້າຢາໂກໂບ? ____________________

ຂ. ເພິ່ນເປັນຫຼານ ຫຼືເປັນເຫຼັນຂອງເຮໂລດຜູ້ຍິ່ງໃຫຍ່? ____________________

**28** ກ. ອາຈານໂປໂລຖືກຕັດສິນຕໍ່ໜ້າເຮໂລດໃດ? ____________________

ຂ. ອາຄີປາທີສອງນັ້ນເປັນເຊື້ອສາຍຢ່າງໃດກັບເຮໂລດຜູ້ຍິ່ງໃຫຍ່? ____________________

**29** ກ. ຄຣິດສະຕຽນຄົນທຳອິດທີ່ເປັນພະຍານເຖິງຄວາມຕາຍ ຊື່ຫຍັງ? ____________________

ຂ. ສາວົກຄົນທຳອິດທີ່ເປັນພະຍານເຖິງຄວາມຕາຍຊື່ຫຍັງ? ____________________

**30** ກ. ໃຫ້ອ່ານ ກຈກ 8:1-3 ແມ່ນແຕ່ພວກຜູ້ນຳແລະສາວົກທີ່ຖືກຂົ່ມເຫງບໍ່? ____________________

ຂ. ໃນ ກຈກ9:13-14 ເຫັນວ່າໂຊໂລມີອຳນາດຈາກປະໂລຫິດເຮັດການຮ້າຍຊາດແລະມັດ ໃຜ? ____________________

ຄ. ໃນ ກຈກ 8:1 ແມ່ນໃຜແຕກກະຈັດກະຈາຍຍ້ອນການຂົ່ມເຫງ? ____________________

**31** ຄຣິດສະຕຽນເຄີຍຖືກຂົ່ມເຫງຢ່າງໜຶ່ງຢ່າງໃດໃນທຸກສະໄໝ ແລະທຸກທະວີບ. ພວກເຮົາສາມາດຮຽນຮູ້ເອົາແບບ ຢ່າງຂອງພວກສາວົກນັ້ນ.

ກ. ໃນ ກຈກ 4:23 ເຫັນວ່າຄັນເປໂຕແລະໂຢຮັນຖືກປ່ອຍແລ້ວເຂົາໄປຫາໃຜ? _________

_______________________________________________________________

ຂ. ໃນ ກຈກ 4:24 ເມື່ອເຂົາທັງຫຼາຍໄດ້ຍິນແລ້ວ ເຂົາພ້ອມໃຈກັນເຮັດຫຍັງ? _________

_______________________________________________________________

**32** ເມື່ອເປໂຕຖືກຂັງຄຸກໄວ້ເທື່ອທີ 3 ຝ່າຍຄຣິດສະຕະຈັກເຮັດຫຍັງ? (ກຈກ 12:5) _________

**33** ຖ້າພວກຄຣິດສະຕຽນໃນສະໄໝນີ້ຖືກການຂົ່ມເຫງ ຄວນເຮັດຫຍັງ? ________________

**34** ໃນກຈກ 4:24 ນັ້ນ ເຂົາຍົກສຽງຂຶ້ນທູນພະເຈົ້າໂດຍໃນໃຈຢ່າງໃດ? ________________

**35** ໃນຄຳອ້ອນວອນນັ້ນ ເຂົາກ່າວເຖິງອຳນາດຂອງໃຜ? ___________________________

**36** ໃນເມື່ອເຮົາອ້ອນວອນ ເປັນການເໝາະສົມທີ່ເຮົາຮັບຮູ້ເລື່ອງຄວາມຮັກແລະອຳນາດຂອງພະເຈົ້າກ່ອນເຮົາຈຶ່ງຈະໄວ້ ໃຈໃນຄຳໝັ້ນສັນຍາຂອງພະເຈົ້າໃນການຊ່ວຍເຮົາ. ອີກປະການໜຶ່ງເປັນການເໝາະສົມທີ່ເຮົາຮ່ວມເປັນຈິດໜຶ່ງໃຈດຽວ.

ກ. ຄຣິດສະຕຽນໃດທີ່ພົບການຂົ່ມເຫງຄວນເຮັດຫຍັງ? ___________________________

ຂ. ຈຶ່ງໄວ້ໃຈໃນຄຳໝັ້ນສັນຍາໃຜ? ________________________________________

ຄ. ຮ່ວມເປັນຈິດໜຶ່ງໃຈດຽວກັບໃຜ? _______________________________________

**37** ຄຣິດສະຕຽນໃນສະໄໝສາວົກກໍມີສ່ວນອ່ອນແອດ້ວຍ.

ກ. ໃນ ກຈກ9:26 ໂຊໂລທີ່ເຄີຍຂົ່ມເຫງຄຣິດສະຕຽນມາກ່ອນມາໄວ້ວາງໃຈກັບພະເຢຊູຖິ້ມໃຈເກົ່າເອົາໃຈໃໝ່. ເພິ່ນຢາກເຂົ້າສະໜິດສະໜົມກັບພວກຄຣິດສະຕຽນ ແຕ່ເຂົາບໍ່ຢາກຮັບເພາະຫຍັງ? ____________________________________________________

ຂ. ໃນ ກຈກ 12:14-16 ເຫັນວ່າຄຣິດສະຕຽນທີ່ອ້ອນວອນນັ້ນຍັງຂາດຄວາມເຊື່ອວ່າພະເຈົ້າຈະຕອບບໍ່? ______________________________________________________

**38** ພວກຄຣິດສະຕຽນໃນຍຸກສາວົກຍັງມີສ່ວນຜິດພາດຢູ່. ເຂົາຍັງຮູ້ຢ້ານແລະບາງເທື່ອຂາດຄວາມເຊື່ອ ແຕ່ເປັນຢ່າງໃດ ກໍ ຕາມ ເຮົາຄວນເອົາເຂົາເປັນແບບຢ່າງ. (ຕື່ມຄວາມທີ່ຂາດ)

ກ. ເຂົາອ້ອນ ______________________________________________________

ຂ. ໄວ້ໃຈໃນຄຳ ___________________________________________ ຂອງພະເຈົ້າ

ຄ. ເຂົ້າຮ່ວມເປັນຈິດ _______________________________________________

**39** ໃນ ກຈກ 4:29 ເຂົາຂໍໃຫ້ພະເຈົ້າໂຜດເຂົາທີ່ຈະກ່າວພະທຳຢ່າງໃດ? (ເລືອກ)



ກ. _______ ດ້ວຍໃຈກ້າ

ຂ. _______ ດ້ວຍຄວາມປອດໄພ

ຄ. _______ ດ້ວຍມີຜູ້ປ້ອງກັນ

**40** ເຂົາຕ້ອງການມີໃຈກ້າເພື່ອຈະເຮັດຫຍັງ? ____________________

**41** ໃນເມື່ອພວກລູກສິດຂອງພະອົງພົບການຂົ່ມເຫງ

ກ. ຄວນເຮັດຫຍັງ? ____________________

ຂ. ໄວ້ໃຈໃນຫຍັງ? ____________________

ຄ. ຮ່ວມຫຍັງ? ____________________

ງ. ບໍ່ຂໍຄວາມປອດໄພ ແຕ່ຂໍຫຍັງ? ____________________

ຈ. ເພື່ອກ່າວຫຍັງ? ____________________

**42** ເມື່ອຢູ່ຕໍ່ໜ້າສານສູງສຸດ ພວກຄຼິດສະຕຽນມີຄວາມຄິດຢ່າງໃດ? (ໃຫ້ອ່ານ ກຈກ 5:29 ແລະ 4:19-20)

ກ. ເຂົາຟັງຄວາມໃຜ? ____________________

ຂ. ເຂົາຈະບໍ່ຍອມອຳສິ່ງໃດໄວ້? ____________________

ຄ. ໃນ ກຈກ 5:41 ເຂົາມີຄວາມຍິນດີທີ່ໄດ້ຖືກຫຍັງ? ____________________

____________________

**43** ຄຼິດສະຕຽນໃດທີ່ຖືກການຂົ່ມເຫງຄວນເຮັດຫຍັງໃນທັນທີນັ້ນ? ____________________

**44** ໃຫ້ອ່ານ ກຈກ 4:3-4 ແລະ 8:4 ແລ້ວອ່ານ ຟີລິບປອຍ 1:13-14 ທີ່ໂປໂລຂຽນເມື່ອຢູ່ໃນຄຸກ. ຄຼິດສະຕຽນທີ່ຖືກຂົ່ມ ເຫງໃນຍຸກນັ້ນ ປ່າວປະກາດຫຼາຍ ຫຼືນ້ອຍກວ່າແຕ່ກ່ອນ? ________

**45** ເຮົາຄວນເຮັດຫຍັງຈຶ່ງຈະທົນຕໍ່ການຂົ່ມເຫງໄດ້? ____________________

**46** ຄວນຂໍຈາກພະເຈົ້າໃຫ້ມີໃຈຢ່າງໃດ? ____________________

**47** ຖ້າເຮົາຮູ້ເລື່ອງຄົນໃນປະເທດຕ່າງ ໆ ທີ່ຖືກການຂົ່ມເຫງ ເຮົາຈະຊ່ວຍເຂົາໄດ້ຢ່າງໃດ? (ອ່ານ ເຮັບເລີ 13:3 ແລ້ວຍົກຄຳຕອບມາຈາກຂໍ້ນັ້ນ ແຕ່ຍັງຍົກມາຈາກຄວາມຄິດຂອງທ່ານເອງກໍໄດ້ດ້ວຍ) ____________________

____________________

____________________

____________________

*ໃຫ້ເປີດເສັງບົດເສັງທີ 13!*

## ຄຳຕອບ:

**1** *ກ. ການຄືນມາຈາກຕາຍ ຂ. ປະໂລຫິດ ນາຍທະຫານ ແລະ ຊາດູກາຍ*
*ຄ. ຂັດໃຈ ງ. ຂັງໄວ້ໃນຄຸກ*

**2** *ເທື່ອທີ 3*

**3** *ສານສູງສຸດ*

**4** *ກ. ຂູ່ເຂັນ ຂ. ບໍ່ໃຫ້ກ່າວ ຫຼືສອນຢ່າງໜຶ່ງຢ່າງໃດໃນນາມຂອງພະເຢຊູ.*

**5** *ກ. ພວກຂອງມະຫາປະໂລຫິດກັບພວກຊາດູກາຍ ຂ. ໃນຄຸກຕະລາງ*

**6** *ກ. ເທວະດາຕົນໜຶ່ງ ຂ. ມະຫາປະໂລຫິດ*

**7** *ທີ 4*

**8** *ກ. ຂັງຄຸກໄວ້ ຂ. 16 ຄົນ (4 x 4) ຄ. ໂສ້ສອງເສັ້ນ*
*ງ. ເທວະດາຂອງພະເຈົ້າ ມານຳໃຫ້ອອກໄປໄດ້*

**9** *3 ເທື່ອ*

**10** *ຊະເຕຟາໂນ*

**11** *ກ. ອັດສະຈັນ ແລະ ໝາຍສຳຄັນ ຂ. ຕໍ່ສູ້ບໍ່ໄດ້*

**12** *ຄວ່າງຫີນໃຫ້ຕາຍ*

**13** *ກ ຖືກ*

**14** *ກ. 3 ເທື່ອ ຂ. ກຈກ 4:3 ກຈກ 5:18 ກຈກ 12:4*

**15** *ຊະເຕຟາໂນ*

**16** *ກ. ຢາໂກໂບ ຂ. ຈຳພວກສາວົກ ຄ. ພວກສາວົກ*

**17** *ກ. ຈອກ; ບັບຕິສະມາ ຂ. ບົດ 12*

**18** *ນ້ອງຂອງພະເຢຊູ*

**19** *ກ. ບໍ່ເຊື່ອເທື່ອ ຂ. ກຸງເຢລູຊາເລັມ*

**20** *ຂ ຖືກ*

**21** *ກ. ຊະເຕຟາໂນ ຂ. ຢາໂກໂບ*

**22** *ເຮໂລດ*

**23** *ກ. ຍິ່ງໃຫຍ່ ຂ. ຜູ້ປົກຄອງເມືອງ (ອັນຕິປາ) ຄ. ຟີລິບ*
*ງ. ຜູ້ປົກຄອງເມືອງ (ອັນຕິປາ)*

**24** *ເຮໂລດຜູ້ຍິ່ງໃຫຍ່*

**25** *ກ. ເຮໂລດອາຄິປາທີໜຶ່ງ ຂ. ໜອນກັດກິນຈົນຕາຍ*

**26** *ເຫຼັນຂອງເຮໂລດຍິ່ງໃຫຍ່*

**27** *ກ. ເຮໂລດອາຄິປາທີໜຶ່ງ ຂ. ຫຼານ*

**28** *ກ. ເຮໂລດອາຄິປາທີສອງ ຂ. ເຫຼັນ*

**29** *ກ. ຊະເຕຟາໂນ ຂ. ຢາໂກໂບ*

**ຄຳຕອບ (ຕໍ່):**

**30** *ກ. ຄຣິດສະຕຽນທຸກຄົນຖືກຂົ່ມເຫງ ຂ. ໄພ່ພົນຂອງພະເຈົ້າ ຄ. ພວກລູກສິດທັງໝົດ*

**31** *ກ. ເພື່ອນຝູງຂອງຕົນ ຂ. ຍົກສຽງຂຶ້ນທູນພະເຈົ້າ (ອ້ອນວອນ)*

**32** *ອ້ອນວອນດ້ວຍໃຈຮ້ອນຮົນ*

**33** *ອ້ອນວອນ*

**34** *ພ້ອມໃຈກັນ*

**35** *ພະເຈົ້າ*

**36** *ກ. ອ້ອນວອນ ຂ. ຂອງພະເຈົ້າ ຄ. ໝູ່ຄຣິດສະຕຽນ*

**37** *ກ. ຍັງຢ້ານເພິ່ນຢູ່ ຂ. ຂາດ*

**38** *ກ. ວອນ ຂ. ໝັ້ນສັນຍາ ຄ. ໜຶ່ງໃຈດຽວກັນ*

**39** *ກ ຖືກ*

**40** *ກ່າວພະທຳ*

**41** *ກ. ອ້ອນວອນ ຂ. ຄຳໝັ້ນສັນຍາຂອງພະເຈົ້າ ຄ. ຈິດໜຶ່ງໃຈດຽວກັບໝູ່ຄຣິດສະຕຽນ*
*ງ. ໃຈກ້າ ຈ. ພະທຳຂອງພະເຈົ້າ*

**42** *ກ. ຄວາມຂອງພະເຈົ້າ ຂ. ສິ່ງທີ່ໄດ້ເຫັນແລະໄດ້ຍິນແລ້ວ*
*ຄ. ຖືກປະໝາດ ນິນທາ ເພາະເຫັນແກ່ພະນາມນັ້ນ*

**43** *ອ້ອນວອນ*

**44** *ຫຼາຍກວ່າ*

**45** *ອ້ອນວອນ*

**46** *ໃຈກ້າ*

**47** *(ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄວາມຄິດເຫັນກັບໝູ່ໃນປະຊຸມ)*